ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຈັດງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII

ສະຫະພັນກິລາບານເຕະແຫ່ງຊາດລາວ

ເລກທີ 617 /ສຕລ

ນະຄອນຫຼວງວຽງຈັນ, ວັນທີ 02 SEP 2025

# ກົດລະບຽບການແຂ່ງຂັນກິລາບານເຕະ

- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ.........;
- ອີງຕາມ ແຈ້ງການເຊີນຂອງຄະນະຮັບຜິດຊອບຈັດງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII;
- ອີງຕາມ ກົດລະບຽບ ແລະ ຂໍ້ບັງຄັບ ຂອງສະຫະພັນບານເຕະແຫ່ງຊາດລາວ.

ເພື່ອເຮັດໃຫ້ການແຂ່ງຂັນດຳເນີນໄປດ້ວຍຄວາມເປັນລະບຽບຮຽບຮ້ອຍ ມີຄວາມສາມັກຄີ ມິດຕະພາບ, ມີນ້ຳໃຈນັກກິລາ ແລະ ເພື່ອຄວາມເປັນເອກະພາບກັນໃນການເຄື່ອນໄຫວແຂ່ງຂັນບານເຕະໃນງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ປີ 2025, ຄະນະກຳມະການຈັດການແຂ່ງຂັນບານເຕະ ຈຶ່ງໄດ້ອອກກົດລະບຽບການແຂ່ງຂັນ ດັ່ງມີລາຍລະອຽດດັ່ງລຸ່ມນີ້:

## ພາກທີ I
## ຫຼັກການທົ່ວໄປ

**ມາດຕາ 01 ຫຼັກການທົ່ວໄປ.**

ການແຂ່ງຂັນບານເຕະງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ປີ 2025 ທີ່ ນະຄອນຫລວງວຽງຈັນ.

**ມາດຕາ 02 ຂອບເຂດການນຳໃຊ້.**

ກົດລະບຽບສະບັບນີ້ ມີສິດຂອບເຂດນຳໃຊ້ສະເພາະແຕ່ໃນໄລຍະຂອງການແຂ່ງຂັນບານເຕະ ປະເພດທີມຊາຍ ແລະ ປະເພດທີມຍິງ ໃນງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ປີ 2025 ທີ່ ນະຄອນຫລວງວຽງຈັນ ນີ້ເທົ່ານັ້ນ.

**ມາດຕາ 03 ກະຕິກາການແຂ່ງຂັນ.**

ການແຂ່ງຂັນບານເຕະງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ປີ 2025 ທີ່ ນະຄອນຫລວງວຽງຈັນສະບັບນີ້ ແມ່ນປະຕິບັດຕາມກະຕິກາການແຂ່ງຂັນຂອງ ສະຫະພັນບານເຕະນາໆຊາດ (FIFA), ສະຫະພັນບານເຕະອາຊີ (AFC) ແລະ ສະຫະພັນບານເຕະແຫ່ງຊາດລາວ (Lao Football Federation) ເປັນຫຼັກ, ພ້ອມກັນນັ້ນ, ການແຂ່ງຂັນໃນຄັ້ງນີ້ຈະຕ້ອງປະຕິບັດຕາມຫຼັກການການຫຼິ້ນດ້ວຍຄວາມຍຸດຕິທຳ, ມີນ້ຳໃຈນັກກິລາ ຮູ້ແພ້, ຮູ້ຊະນະ ແລະ ການໃຫ້ອະໄພເຊິ່ງກັນ ແລະ ກັນ.

# ພາກທີ II

# ຄະນະກຳມະການຈັດການແຂ່ງຂັນ

**ມາດຕາ 04 ຄະນະຮັບຜິດຊອບຈັດການແຂ່ງຂັນກິລາບານເຕະງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII.**

4.1 ຄະນະຮັບຜິດຊອບການແຂ່ງຂັນບານເຕະປະກອບດ້ວຍ:

- ສະຫະພັນບານເຕະແຫ່ງຊາດລາວ.
- ສະຫະພັນບານເຕະ ນະຄອນຫລວງ.
- ຜູ້ຕາງໜ້າຈາກກົມກິລາລະດັບສູງ.
- ຜູ້ຕາງໜ້າຈາກພະແນກສຶກສາທິການ ແລະ ກິລາ ນະຄອນຫຼວງ.

4.2 ອະນຸກຳມະການລະບຽບວິໄນ ປະກອບດ້ວຍ:

- ຫົວໜ້າ 01 ທ່ານ
- ຄະນະກຳມະການ 02 ທ່ານ

ເຊິ່ງໄດ້ຮັບການແຕ່ງຕັ້ງຈາກ ສະຫະພັນບານເຕະແຫ່ງຊາດລາວ, ມີສິດ ແລະ ໜ້າທີ່ໃນການຕິດຕາມພຶດຕິກຳ ແລະ ການກະທຳໃດໜຶ່ງທີ່ບໍ່ເໝາະສົມຂອງ ຄະນະນຳ ແລະ ນັກກິລາ ໃນສະໜາມແຂ່ງຂັນ (ໃນໄລຍະກ່ອນ, ໄລຍະການແຂ່ງຂັນ ແລະ ພາຍຫຼັງສິ້ນສຸດການແຂ່ງຂັນ) ທີ່ບໍ່ເໝາະສົມເຊິ່ງຜູ້ກ່ຽວຂ້ອງຈະຖືກຕັກເຕືອນ ແລະ ປະຕິບັດວິໄນຕາມຄວາມເໝາະສົມ.

4.3 ອະນຸກຳມະການຕັດສິນການແຂ່ງຂັນບານເຕະ ປະເພດຊາຍ ແລະ ປະເພດຍິງ ປະກອບດ້ວຍ:

- ຫົວໜ້າ 01 ທ່ານ
- ຄະນະກຳມະການ 02 ທ່ານ

ເຊິ່ງໄດ້ຮັບການແຕ່ງຕັ້ງຈາກ ສະຫະພັນບານເຕະແຫ່ງຊາດລາວ, ມີສິດ-ໜ້າທີ່ໃນການຂຶ້ນແຜນຄັດເລືອກກຳມະການຕັດສິນ ຈາກ ສຕລ ແລະ ແຂວງຕ່າງໆ ທີ່ໄດ້ຜ່ານການຝຶກອົບຮົມ, ທົດສອບ ແຕ່ງຕັ້ງກຳມະການຕັດສິນລົງໃນແຕ່ລະນັດຂອງການແຂ່ງຂັນ ພ້ອມທັງສົ່ງລາຍຊື່ກຳມະການຕັດສິນໃຫ້ຄະນະຮັບຜິດຊອບການແຂ່ງຂັນເພື່ອຕິດຕາມ ແລະ ກວດກາຕື່ມ, ນອກຈາກນັ້ນ ຕ້ອງສົ່ງບົດລາຍງານການແຂ່ງຂັນໃຫ້ແກ່ຄະນະຮັບຜິດຊອບການແຂ່ງຂັນ.

4.4 ອະນຸກຳມະການເຕັກນິກຈັດການແຂ່ງຂັນບານເຕະ ປະເພດຊາຍ ແລະ ປະເພດຍິງ ປະກອບດ້ວຍ:

- ຫົວໜ້າ 01 ທ່ານ
- ຄະນະກຳມະການ 02 ທ່ານ

ເຊິ່ງໄດ້ຮັບການແຕ່ງຕັ້ງຈາກ ສະຫະພັນບານເຕະແຫ່ງຊາດລາວ, ມີສິດ-ໜ້າທີ່ເຜີຍແຜ່ກົດລະບຽບເຕັກນິກຕ່າງໆໃນການຈັດການແຂ່ງຂັນບານເຕະ, ການຈັບສະຫຼາກ, ການສ້າງຕາຕະລາງແຂ່ງຂັນປະກົບຄູ່ແຂ່ງຂັນ, ກຳນົດວັນເວລາ, ສະຖານທີ່ໃນການແຂ່ງຂັນ ສະຫຼຸບລາຍງານຜົນການແຂ່ງຂັນໃນແຕ່ລະນັດພາຍຫຼັງສິ້ນສຸດການແຂ່ງຂັນ ແລ້ວສົ່ງໃຫ້ຄະນະຮັບຜິດຊອບທີມທີ່ເຂົ້າຮ່ວມການແຂ່ງຂັນ ລວມທັງສົ່ງໃຫ້ການຈັດຕັ້ງທີ່ກ່ຽວຂ້ອງເພື່ອຮັບຊາບ ເພື່ອຈັດຕັ້ງປະຕິບັດ.

## ພາກທີ III

## ວ່າດ້ວຍມາດຕະການ ແລະ ເງື່ອນໄຂການເຂົ້າຮ່ວມແຂ່ງຂັນ

**ມາດຕາ 05 ທີມບານເຕະທີ່ຈະເຂົ້າຮ່ວມແຂ່ງຂັນ.**

ທີມບານເຕະທີ່ຈະເຂົ້າຮ່ວມການແຂ່ງຂັນງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ປີ 2025 ທີ່ ນະຄອນຫລວງວຽງຈັນ ຈະຕ້ອງມາຈາກ ບັນດາແຂວງ ແລະ ນະຄອນຫຼວງ ເທົ່ານັ້ນ ທີ່ປະຕິບັດຕາມ ເງື່ອນໄຂ, ຂໍ້ກຳນົດຂອງຄະນະຈັດການແຂ່ງຂັນ ເຊິ່ງແຕ່ລະພາກສ່ວນສາມາດສົ່ງທີມເຂົ້າຮ່ວມໄດ້ 1 ທີມ ຊາຍ ແລະ 1 ທີມຍິງ.

**ມາດຕາ 06 ການລົງທະບຽນນັກກິລາ ແລະ ຄະນະຄູຝຶກ.**

6.1 ນັກກິລາບານເຕະ ແລະ ຄະນະຄູຝຶກ ຂອງແຕ່ລະທີມທີ່ສາມາດເຂົ້າຮ່ວມການແຂ່ງຂັນໃນຄັ້ງນີ້ ແມ່ນຈະຕ້ອງບໍ່ຢູ່ໃນລາຍຊື່ຖືກປະຕິບັດວິໄນຈາກ ສະຫະພັນບານເຕະນານາຊາດ (FIFA), ສະຫະພັນບານເຕະອາຊີ (AFC), ສະຫະພັນບານເຕະອາຊຽນ( AFF) ແລະ ສະຫະພັນບານເຕະແຫ່ງຊາດລາວ.

6.2 ນັກກິລາທີ່ສາມາດລົງທະບຽນເຂົ້າຮ່ວມການແຂ່ງຂັນຕ້ອງມີອາຍຸ 15 ປີຂຶ້ນໄປ, ຄະນະຄູຝຶກຂອງທີມໃນທຸກໆຕຳແໜ່ງຈະຕ້ອງອາຍຸ 18 ປີຂຶ້ນໄປ.

6.3 ແຕ່ລະທີມທັງປະເພດຊາຍ ແລະ ປະເພດຍິງ ແມ່ນສາມາດສົ່ງຈຳນວນນັກກິລາ ແລະ ຄະນະຄູຝຶກ ດັ່ງນີ້:

- ນັກກິລາ: 20 ທ່ານ.
- ຄະນະຄູຝຶກ: 7 ທ່ານ.

**ມາດຕາ 07 ລະບຽບການສະໝັກເຂົ້າຮ່ວມແຂ່ງຂັນ.**

ແຂວງ, ນະຄອນຫຼວງ ຫຼື ພາກສ່ວນໃດທີ່ຈະເຂົ້າຮ່ວມແຂ່ງຂັນບານເຕະໃນງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ປີ 2025 ທີ່ ນະຄອນຫລວງວຽງຈັນ ນັ້ນຈະຕ້ອງໄດ້ປະຕິບັດຕາມລະບຽບດັ່ງຕໍ່ໄປນີ້:

7.1 ຕ້ອງຍື່ນຄຳຮ້ອງສະໝັກເຂົ້າຮ່ວມການແຂ່ງຂັນບານເຕະໃນງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ປີ 2025 ທີ່ ນະຄອນຫລວງວຽງຈັນ ເຖິງກອງເລຂາກະຊວງສຶກສາທິການ ແລະ ກິລາ (ກົມກິລາລະດັບສູງ).

7.2 ລາຍຊື່ອົງປະກອບຂອງທີມມີດັ່ງລຸ່ມນີ້:

- ຫົວໜ້າຄະນະ 1 ທ່ານ
- ຫົວໜ້າຄູຝຶກ 1 ທ່ານ (ຕ້ອງມີໃບປະກາດຄູຝຶກ C ຈາກ AFC ຂຶ້ນໄປ)
- ຜູ້ຊ່ວຍຄູຝຶກ 2 ທ່ານ (ຕ້ອງມີໃບປະກາດຄູຝຶກ D ຈາກ LFF ຂຶ້ນໄປ)
- ຄູຝຶກຜູ້ຮັກສາປະຕູ 1 ທ່ານ (ຕ້ອງມີໃບປະກາດຄູຝຶກ D ຈາກ LFF ຂຶ້ນໄປ)
- ແພດປະຈຳທີມ 1 ທ່ານ (ຕ້ອງມີໃບປະກາດຈົບຫຼັກສູດການແພດ)
- ຜູ້ຈັດການທີມ ຫຼື ບໍລິຫານທີມ 1 ທ່ານ (ຕ້ອງເປັນຜູ້ທີ່ສາມາດຕາງໜ້າປະສານງານວຽກງານຕ່າງໆ ຂອງທີມໃນໄລຍະການແຂ່ງຂັນໄດ້)
- ນັກກິລາ ທັງໝົດບໍ່ເກີນ 20 ທ່ານ

ບັນດາລາຍຊື່ທີ່ໄດ້ກ່າວມາຂ້າງເທິງນີ້ຈະຕ້ອງໄດ້ຜ່ານການຮັບຮອງຈາກປະທານສະຫະພັນກິລາບານເຕະ ຂອງ ບັນດາແຂວງ ແລະ ນະຄອນຫຼວງ ຈຶ່ງຖືວ່າຖືກຕ້ອງ ແລະ ສຳເນົາສົ່ງໃຫ້ຄະນະສະຫະພັນກິລາບານເຕະແຫ່ງ ຊາດລາວ ເພື່ອກວດກາ ແລະ ຢັ້ງຢືນຈຳນວນ 1 ຊຸດ ພາຍໃນ 45 ວັນກ່ອນການແຂ່ງຂັນ. ພາຍຫຼັງທີ່ໄດ້ສົ່ງ

ລາຍຊື່ໃຫ້ສະຫະພັນບານເຕະແຫ່ງຊາດແລ້ວ ນັກກິລາບໍ່ມີສິດຍົກຍ້າຍໄປສັງກັດທີມອື່ນໄດ້ ນັກກິລາຈະຕ້ອງລົງແຂ່ງຂັນໃຫ້ທີມຈົນຈົບງານມະຫະກຳກິລາແຫ່ງຊາດຄັ້ງນີ້ ແລະ ບໍ່ອະນຸຍາດໃຫ້ໄປຫຼິ້ນນຳທີມອື່ນອີກພາຍຫຼັງທີ່ທີມຕົນຕົກຮອບແລ້ວ.

7.3 ການລົງທະບຽນນັກກິລາ.

- <u>ປະເພດທີມຊາຍ:</u>
  - ນັກກິລາປະເພດຊາຍທີ່ລົງທະບຽນເຂົ້າຮ່ວມການແຂ່ງຂັນແມ່ນຈະຕ້ອງມີສັນຊາດລາວ ທີ່ມີອາຍຸ 15 ປີບໍລິບູນຂຶ້ນໄປ.
  - ບໍ່ອະນຸຍາດໃຫ້ລົງທະບຽນ ນັກກິລາທີ່ມີລາຍຊື່ສຸດທ້າຍທີ່ລົງທະບຽນເຂົ້າຮ່ວມການແຂ່ງຂັນ ເປບຊີ ລາວລີກ 1 ລະດູການ 2025/26 ເຖິງຈະບໍ່ໄດ້ລົງແຂ່ງຂັນຈັກນັດກໍຕາມ;
  - ບໍ່ອະນຸຍາດໃຫ້ລົງທະບຽນນັກກິລາທີມຊາດລາວ ປະເພດຊາຍ ຮຸ່ນອາຍຸບໍ່ເກີນ 16 ປີ ຂຶ້ນໄປ(U16) ຈົນເຖິງ ທີມຊາດລາວຊຸດໃຫຍ່ ທີ່ເຂົ້າຮ່ວມເຄື່ອນໄຫວໃນປີ 2024 ແລະ ປີ 2025 (ສະເພາະຜູ້ທີ່ມີລາຍຊື່ສຸດທ້າຍ(Final List)ທີ່ເຂົ້າຮ່ວມແຂ່ງຂັນໃນລະດັບທີມຊາດ).
  - ບໍ່ອະນຸຍາດໃຫ້ລົງທະບຽນ ນັກກິລາສັນຊາດລາວທີ່ລົງທະບຽນເຂົ້າຮ່ວມແຂ່ງຂັນບານເຕະໃນລີກຂອງຕ່າງປະເທດ.
- <u>ປະເພດທີມຍິງ:</u>
  - ນັກກິລາປະເພດຍິງທີ່ລົງທະບຽນເຂົ້າຮ່ວມການແຂ່ງຂັນແມ່ນຈະຕ້ອງມີສັນຊາດລາວ ທີ່ມີອາຍຸ 15 ປີບໍລິບູນຂຶ້ນໄປ.
  - ນັກກິລາບານເຕະຍິງທີ່ເຂົ້າຮ່ວມການແຂ່ງຂັນບານເຕະ ລາວລີກ ຍິງ ປະຈຳປີ 2025 ແມ່ນສາມາດລົງທະບຽນ ແລະ ແຂ່ງຂັນໄດ້ໂດຍບໍ່ຈຳກັດຈຳນວນ.
  - ທີມບານເຕະຍິງ ສາມາດລົງທະບຽນນັກກິລາທີ່ມີລາຍຊື່ໃນທີມຊາດຍິງ(ສະເພາະທີມຊາດຊຸດໃຫຍ່) ທີ່ເຄື່ອນໄຫວໃນປີ 2024 ແລະ ປີ 2025 ໄດ້ສູງສຸດບໍ່ເກີນ 04 ຄົນ/ທີມ ສາມາດສົ່ງລົງສະໜາມໄດ້ສູງສຸດ 04 ຄົນຕໍ່ນັດ.

**ມາດຕາ 08 ການຂຶ້ນທະບຽນສີຊຸດແຂ່ງຂັນ.**

- ແຕ່ລະທີມຈະຕ້ອງຂຶ້ນທະບຽນສີເຄື່ອງນຸ່ງຂອງຕົນ ຢ່າງໜ້ອຍ 02 ສີ ພ້ອມນໍ້າເບີຂອງເສື້ອ, ໂສ້ງ.
- ຂະໜາດຂອງເບີຈະຕ້ອງສູງບໍ່ເກີນ 25 ຊມ, ເບີໂສ້ງ 7 ຊມ ແລະ ຈະຕ້ອງພິມເບີໃຫ້ເປັນແບບດຽວກັນ ແຕ່ເບີ 1 ຫາ 20 ເທົ່ານັ້ນ.
- ນັກກິລາຈະຕ້ອງໃສ່ເສື້ອຕາມນໍ້າເບີທີ່ໄດ້ລົງທະບຽນແລ້ວນັ້ນ ໄປຈົນສິ້ນສຸດການແຂ່ງຂັນ ບໍ່ອະນຸຍາດໃຫ້ປ່ຽນເບີນັກກິລາໃນລະຫວ່າງການແຂ່ງຂັນເດັດຂາດ.
- ໃນກອງປະຊຸມເຕັກນິກ ຄະນະນຳຕ້ອງເອົາຊຸດແຂ່ງຂັນຂອງທີມຕົນທັງສອງສີ ພ້ອມທັງຊຸດຜູ້ຮັກສາປະຕູ (ຕົວຈິງ ແລະ ຕົວສຳຮອງ) ສະເໜີຕໍ່ກອງປະຊຸມເຕັກນິກ ເຊິ່ງຈະຈັດຂຶ້ນໜຶ່ງວັນກ່ອນການແຂ່ງຂັນ.
- ພາຍຫຼັງສິ້ນສຸດການປະຊຸມເຕັກນິກໃຫ້ຄະນະຄູຝຶກ ເອົາບັດນັກກິລາ (AD Card) ທັງໝົດມາແຈ້ງຊື່ ແລະ ນໍ້າເບີເສື້ອ ຕໍ່ຄະນະຈັດການແຂ່ງຂັນເພື່ອກວດສອບ.

- ທຸກທີມຕ້ອງນຸ່ງຊຸດແຕ່ງກາຍ ຕາມສີເສື້ອ, ໂສ້ງ ແລະ ຖົງຕີນ ທີ່ໄດ້ແຈ້ງໄວ້ໃນກອງປະຊຸມເຕັກນິກກ່ອນການແຂ່ງຂັນເທົ່ານັ້ນ.
- ໃນກໍລະນີຊຸດແຂ່ງຂັນຄ້າຍຄືກັນໃຫ້ທີມທີ່ເປັນທີມ B (ທີມຢາມ) ຕ້ອງປ່ຽນສີຊຸດແຂ່ງຂັນ ໂດຍອີງຕາມການພິຈາລະນາຂອງກຳມະການຕັດສິນທີ່ເຮັດໜ້າທີ່ໃນນັດນັ້ນ.
- ນັກກິລາຜູ້ທີ່ເປັນຫົວໜ້າທີມ ຕ້ອງໄດ້ໃສ່ປອກແຂນເບື້ອງຊ້າຍຢ່າງຊັດເຈນ.

**ມາດຕາ 09 ຄວາມໝາຍຂອງບັດເຫຼືອງ - ບັດແດງ.**

ເປັນການເຕືອນນັກກິລາ ໃຫ້ຫຼິ້ນດ້ວຍຄວາມລະມັດລະວັງ ແລະ ຖືກຕ້ອງຕາມລະບຽບກະຕິກາການແຂ່ງຂັນ, ມີນ້ຳໃຈນັກກິລາ. ເຊິ່ງຄະນະນຳ ແລະ ນັກກິລາຕ້ອງປະຕິບັດຕາມກຳມະການຕັດສິນ, ດັ່ງລາຍລະອຽດລຸ່ມນີ້:

9.1 ນັກກິລາທີ່ຖືກບັດເຫຼືອງ 1 ບັດ ໃນນັດໜຶ່ງ ແມ່ນເປັນການຕັກເຕືອນ ແລະ ສະສົມໄວ້, ຖ້າຫາກໄດ້ບັດເຫຼືອງອີກໃນນັດດຽວກັນເປັນ 2 ບັດເຫຼືອງ ຈະເທົ່າກັບບັດແດງ (2ເຫຼືອງເປັນແດງ). ນັກກິລາດັ່ງກ່າວຕ້ອງອອກຈາກການແຂ່ງຂັນ, ບໍ່ອານຸຍາດໃຫ້ນັ່ງໃນເຂດເຕັກນິກ ແລະ ຈະບໍ່ໄດ້ລົງແຂ່ງຂັນ 1 ນັດຖັດໄປ.

9.2 ນັກກິລາໄດ້ບັດເຫຼືອງ 1 ຄັ້ງໃນການແຂ່ງຂັນ ແລະ ຄັ້ງທີ 2 ເປັນບັດແດງໂດຍກົງ(ໂດຍບໍ່ມີບັດເຫຼືອງກ່ອນ), ນັກກິລາຄົນດັ່ງກ່າວຕ້ອງອອກຈາກການແຂ່ງຂັນ, ບໍ່ໃຫ້ນັ່ງຢູ່ໃນເຂດເຕັກນິກ ແລະ ບໍ່ສາມາດລົງແຂ່ງຂັນໃນ 2 ນັດຖັດໄປ(ສ່ວນບັດເຫຼືອງທີ່ໄດ້ຈະກາຍເປັນບັດເຫຼືອງສະສົມໄວ້) ບໍ່ອານຸຍາດໃຫ້ລົງໄປນັ່ງຮ່ວມກັບທີມໃນເຂດເຕັກນິກຈົນກວ່າຈະພົ້ນໂທດ.

9.3 ນັກກິລາທີ່ໄດ້ 1 ບັດເຫຼືອງໃນນັດທີ່ຜ່ານມາ ແລະ ໄດ້ບັດເຫຼືອງອີກໃນນັດໃໝ່ (ບັດເຫຼືອງສະສົມ 3 ບັດ) ນັກກິລາດັ່ງກ່າວຈະບໍ່ໄດ້ລົງແຂ່ງຂັນ 1 ນັດຖັດໄປ.

9.4 ນັກກິລາໄດ້ຮັບບັດແດງໂດຍກົງ ໃນການແຂ່ງຂັນ ນັກກິລາທີ່ຖືກໄດ້ອອກຈາກການແຂ່ງຂັນ, ບໍ່ອານຸຍາດໃຫ້ໄປນັ່ງຮ່ວມກັບທີມໃນເຂດເຕັກນິກ ແລະ ບໍ່ສາມາດລົງແຂ່ງຂັນ 2 ນັດຖັດໄປ ແລະ ຄະນະກຳມະການຈັດການແຂ່ງຂັນຈະສົ່ງລາຍງານເຖິງຄະນະກຳມະການລະບຽບວິໄນເພື່ອພິຈາລະນາໃນກໍລະນີດັ່ງກ່າວ ຫາກເຫັນວ່າເປັນການເຈດຕະນາ ຫຼື ຈິງໃຈເຮັດຟາວ ຄະນະກຳມະການລະບຽບວິໄນຈະພິຈາລະນາໂທດເພີ່ມອີກຕາມ ກໍລະນີ ໜັກ ຫຼື ເບົາ.

9.5 ບັດເຫຼືອງ ແລະ ບັດແດງ ທີ່ໄດ້ຈະສະສົມໄປຈົນຈົບການແຂ່ງຂັນ.

**ມາດຕາ 10 ມາດຕະການ**

10.1 ການປອມແປງເອກະສານການທາງການໃດໜຶ່ງ ຫຼື ປົກປິດຂໍ້ມູນຂອງນັກກິລາພາຍໃນທີມຂອງຕົນ ເພື່ອໃຫ້ໄດ້ເຂົ້າຮ່ວມການແຂ່ງຂັນ ນັກກິລາຄົນດັ່ງກ່າວແມ່ນຈະຖືກຕັດລາຍຊື່ອອກຈາກການແຂ່ງຂັນທັນທີ, ແຕ່ຖ້ານັກກິລາຍັງລົງແຂ່ງຂັນໃຫ້ທີມຢູ່ ທີມນັ້ນຈະຖືກຕັດສິດອອກຈາກການແຂ່ງຂັນ ແລະ ຖືກລະບຽບວິໄນ, ສ່ວນຄະນະນຳທີມທີ່ມີສ່ວນຮັບຮູ້ ແລະ ມີສ່ວນກ່ຽວຂ້ອງກັບການປອມແປງດັ່ງກ່າວ ແມ່ນຈະໄດ້ຖືກປະຕິບັດວິໄນ ຈາກຄະນະຮັບຜິດຊອບຈັດການແຂ່ງຂັນ.

10.2 ຄະນະນຳ ຫຼື ນັກກິລາທີ່ມີພຶດຕິກຳບໍ່ເໝາະສົມ, ເວົ້າຈາບໍ່ສຸພາບ, ດ່າກຳມະການຕັດສິນ, ຫຼື ຄະນະຈັດການແຂ່ງຂັນ ແມ່ນຈະຖືກຕັກເຕືອນ ແລະ ໃຫ້ອອກຈາກເຂດເຕັກນິກການແຂ່ງຂັນ ຫຼື ອອກຈາກສະໜາມແຂ່ງຂັນ.

10.3 ຄະນະນໍາ ຫຼື ນັກກິລາທີ່ມີພຶດຕິກໍາຮ້າຍແຮງ ຕໍ່ກໍາມະການຕັດສິນ ຫຼື ຄະນະຈັດການແຂ່ງຂັນ, ແມ່ນຈະຍຸດຕິນັດແຂ່ງຂັນດັ່ງກ່າວ ໃຫ້ທີມທີ່ກໍ່ເຫດເສຍຟາວໃຫ້ຄູ່ຕໍ່ສູ້ທັນທີ ແລະ ຈະມີການພິຈາລະນາຂອງຄະນະກໍາມະການຈັດການແຂ່ງຂັນ ໂດຍສົມທົບກັບຄະນະກໍາມະການລະບຽບວິໄນ ພ້ອມທັງກໍາມະການຕັດສິນ ເຖິງກໍລະນີທີ່ເກີດຂຶ້ນ ໜັກ ຫຼື ເບົາ.

## ພາກທີ IV

## ການແບ່ງສາຍ, ລະບົບຂອງການແຂ່ງຂັນ, ວັນເວລາ ແລະ ສະຖານທີ່ແຂ່ງຂັນ

**ມາດຕາ 11 ການແບ່ງສາຍ.**

- ການແຂ່ງຂັນກິລາບານເຕະໃນງານມະຫະກໍາກິລາແຫ່ງຊາດ ຄັ້ງທີ XII ປີ 2025 ຈະໄດ້ແບ່ງຕາມຈໍານວນທີມທີ່ເຂົ້າຮ່ວມການແຂ່ງຂັນ, ຖ້າຫາກມີຈໍານວນທີມເຂົ້າຮ່ວມແຂ່ງຂັນຫຼາຍກວ່າ 05 ທີມຂຶ້ນໄປ ຈະໄດ້ແບ່ງເປັນສາຍການແຂ່ງຂັນ ເຊິ່ງແຕ່ລະສາຍຈະມີການຈັບສະຫຼາກເອົາຊື່ທີມ ຈາກນັ້ນ, ແມ່ນຈະຈັບສະຫຼາກເອົາຕົວເລກເຂົ້າໃນແຕ່ລະສາຍ ຍົກເວັ້ນທີມເຈົ້າພາບສາມາດເລືອກເຂົ້າໃນສາຍຕາມທີ່ຕ້ອງການພາຍຫຼັງການຈັບສະຫຼາກດໍາເນີນໄປໄດ້ 2/3 ຂອງສາຍໃດໜຶ່ງ ແຕ່ຈະຕ້ອງໄດ້ແຂ່ງຂັນຕາມຕົວເລກຂອງຕາຕະລາງແຂ່ງຂັນ.
- ການແຂ່ງຂັນບານເຕະຍິງແມ່ນຈະຈັບສະຫຼາກ ເຊັ່ນກັນກັບປະເພດຊາຍ ຍົກເວັ້ນທີມເຈົ້າພາບສາມາດເລືອກເຂົ້າໃນສາຍຕາມທີ່ຕ້ອງການໄດ້ ພາຍຫຼັງການຈັບສະຫຼາກດໍາເນີນໄປໄດ້ 2/3 ຂອງແຕ່ລະສາຍ.
- ຖ້າມີທີມເຂົ້າຮ່ວມແຂ່ງຂັນໜ້ອຍກວ່າ 05 ທີມເຂົ້າຮ່ວມແຂ່ງຂັນ ແມ່ນຈະໃຫ້ແຂ່ງຂັນເປັນສາຍດຽວເຊິ່ງແຕ່ລະທີມຈະຕ້ອງແຂ່ງຂັນແບບພົບກັນໝົດ (ບໍ່ມີຮອບກັບ), ທີມທີ່ໄດ້ທີ 1 ແລະ ທີ 2 ຈະໄດ້ເຂົ້າໄປຊີງຊະນະເລີດ. ທີມທີ່ໄດ້ທີ 3 ແມ່ນຈະຮັກສາອັນດັບຕາມຄະແນນທີ່ໄດ້ແຂ່ງຂັນຜ່ານມາ.

11.0 ການຄິດໄລ່ຄະແນນ ແລະ ການຕັດສິນສຸດທ້າຍ ໃນຮອບແບ່ງກຸ່ມ.

11.1 ການຄິດໄລ່ຄະແນນ

- ຊະນະໄດ້ 3 ຄະແນນ
- ສະເໝີໄດ້ 1 ຄະແນນ
- ເສຍໄດ້ 0 ຄະແນນ

11.2 ກໍລະນີທີ່ທີມມີຄະແນນລວມເທົ່າກັນໃນສາຍ ແມ່ນຈະຕັດສິນດັ່ງນີ້:

- ຜົນການແຂ່ງຂັນຂອງນັດທີ່ພົບກັນ(Head to Head)
    - ນັດພົບກັນ (Head-to-Head), ການຄິດໄລ່ (Head-to-Head) ຈະຄິດໄລ່ສະເພາະຜົນການແຂ່ງຂັນລະຫວ່າງ 2 ສະໂມສອນພົບກັນໃນຮອບຂາໄປ ແລະ ຮອບຂາກັບ ມາພິຈາລະນາ. ການຄິດໄລ່ຫາຜູ້ຊະນະໃນກົດ Head-to-Head ຈະເລີ່ມຈາກຄະແນນທີ່ທີມນັ້ນເກັບໄດ້ຈາກນັດທີ່ພົບກັນເອງຂອງທີມທີ່ມີຄະແນນສະເໝີກັນ (ນໍາໃຊ້ກໍລະນີມີ 2 ທີມທີ່ມີຄະແນນລວມສະເໝີກັນຂຶ້ນໄປ), ຈໍານວນປະຕູສະເລ່ຍ (ຜົນຕ່າງປະຕູໄດ້-ເສຍຂອງນັດທີ່ພົບກັນເອງຂອງທີມທີ່ມີຄະແນນລວມສະເໝີກັນ),ຄະແນນຄຸນສົມບັດ(ຈໍານວນບັດເຫຼືອງ ແລະ ບັດແດງທີ່ໄດ້ຮັບໃນນັດທີ່ພົບກັນເອງ). ຖ້າຫາກພິຈາລະນາໃນເງື່ອນໄຂທີ່ກ່າວມານີ້ແລ້ວຍັງສະເໝີກັນຢູ່ແມ່ນໃຫ້ນໍາໃຊ້ເງື່ອນໄຂຕໍ່ໄປ.

- ປະຕູສະເລ່ຍລວມ (Goal Difference).
- ປະຕູໄດ້ລວມທີ່ຫຼາຍກ່ວາ (Goal For).
- ປະຕູເສຍລວມທີ່ໜ້ອຍກ່ວາ (Goal Against).
- ນໍາໃຊ້ຫຼັກການຄະແນນຄຸນສົມບັດຂອງທີມຕາມກົດລະບຽບຂອງສະຫະພັນບານເຕະນາໆຊາດ (FIFA) ຄືການນັບຈໍານວນບັດ ເຫຼືອງ ແລະ ແດງຂອງທີມ.
- ເຕະຈຸດໂທດ 11 ແມັດ (ຖ້າຫາກທີມຍັງຢູ່ໃນລະຫວ່າງແຂ່ງຂັນ)

○ ຖ້າໃນກໍລະນີພິຈາລະນາຕາມຫຼັກການຂ້າງເທິງຕາມລໍາດັບແລ້ວ ຫາກໄດ້ຂໍ້ສະຕັດສິນ ຂໍ້ໃດຂໍ້ໜຶ່ງແລ້ວແມ່ນໃຫ້ຢຸດຕິການພິຈາລະນາຂໍ້ຕໍ່ໄປ.

**ມາດຕາ 12 ການແຂ່ງຂັນຮອບກ່ອນຮອງຊະນະເລີດ (ຮອບ 8 ທີມ)**

ເມື່ອສິ້ນສຸດການແຂ່ງຂັນຮອບທໍາອິດແລ້ວຈະມີການລວມຄະແນນທັງໝົດ ແລະ ສະຫຼຸບຜົນການແຂ່ງຂັນ , ຊຶ່ງຈະເອົາທີມອັນດັບໜຶ່ງ ແລະ ສອງຂອງແຕ່ລະສາຍ ເຂົ້າໄປແຂ່ງຂັນຮອບ 8 ທີມ ດັ່ງລາຍລະອຽດນີ້:

- ນັດທີ 1 : ອັນດັບ 1 ສາຍ ກໍ ພົບກັບ ທີ 2 ສາຍ ຄໍ
- ນັດທີ 2 : ອັນດັບ 1 ສາຍ ຂໍ ພົບກັບ ທີ 2 ສາຍ ງໍ
- ນັດທີ 3 : ອັນດັບ 1 ສາຍ ຄໍ ພົບກັບ ທີ 2 ສາຍ ກໍ
- ນັດທີ 4 : ອັນດັບ 1 ສາຍ ງໍ ພົບກັບ ທີ 2 ສາຍ ຂໍ

**ມາດຕາ 13 ການແຂ່ງຂັນຮອບຮອງຊະນະເລີດ (ຮອບ 4 ທີມ)ຈະມີການແຂ່ງຂັນດັ່ງນີ້.**

- ທີມຊະນະຮອບ8ທີມນັດທີ 1 **ພົບກັບ** ທີມຊະນະຮອບ8ທີມ ນັດທີ 2.
- ທີມຊະນະຮອບ8ທີມນັດທີ 3 **ພົບກັບ** ທີມຊະນະ ທີມຊະນະຮອບ8ທີມຄູ່ທີ 4.

**ມາດຕາ 14 ການແຂ່ງຂັນໃນນັດຊີງອັນດັບ 3 ຈະແຂ່ງຂັນດັ່ງນີ້.**

- ທີມທີ່ເສຍໃນການແຂ່ງຂັນຮອບຮອງຊະນະເລີດ ແມ່ນຈະໄດ້ເປັນຄູ່ຊີງອັນດັບ 3.

**ມາດຕາ 15 ການແຂ່ງຂັນໃນຮອບຊີງຊະນະເລີດຈະແຂ່ງຂັນດັ່ງນີ້.**

- ທີມທີ່ຊະນະໃນການແຂ່ງຂັນໃນຮອບຮອງຊະນະເລີດຈະໄດ້ເປັນຄູ່ຊີງຊະນະເລີດ.

**ມາດຕາ 16 ເວລາການແຂ່ງຂັນ ແລະ ການຕໍ່ເວລາ.**

- ການແຂ່ງຂັນແມ່ນໃຊ້ເວລາ 90 ນາທີ ແລະ ແບ່ງເປັນ 2 ໄລຍະ, ໄລຍະລະ 45 ນາທີ, ເວລາພັກເຄິ່ງ 15 ນາທີ (ທັງທີມຊາຍ ແລະ ທີມຍິງ).
- ໃນຮອບຄັດເລືອກຂອງແຕ່ລະສາຍຈະບໍ່ມີການຕໍ່ເວລາພິເສດ.
- ການແຂ່ງຂັນໃນຮອບ 8 ທີມ ຈະບໍ່ມີການຕໍ່ເວລາພິເສດ ຖ້າຜົນການແຂ່ງຂັນເວລາປົກກະຕິສະເໝີກັນແມ່ນຈະຕັດສິນດ້ວຍການເຕະຈຸດໂທດ 11 ແມັດ ທັນທີເພື່ອຫາທີມຊະນະ.
- ການແຂ່ງຂັນຮອບຮອງຊະນະເລີດ ຖ້າຜົນການແຂ່ງຂັນໃນເວລາປົກກະຕິສະເໝີກັນ ແມ່ນຈະມີການຕໍ່ເວລາພິເສດ 15 ນາທີ x 2 = 30 ນາທີ ຖ້າໝົດເວລາການຕໍ່ເວລາພິເສດຍັງສະເໝີກັນຢູ່ ຈະໃຫ້ມີການເຕະຈຸດໂທດ 11 ແມັດ ທັນທີເພື່ອຫາທີມຊະນະເລີດ.

- ການແຂ່ງຂັນນັດຊີງອັນດັບ 3 ແມ່ນຈະບໍ່ມີການຕໍ່ເວລາພິເສດ, ຖ້າຜົນການແຂ່ງຂັນເວລາປົກກະຕິສະເໝີກັນ ແມ່ນຈະດໍາເນີນການເຕະຈຸດໂທດ 11 ແມັດ ທັນທີເພື່ອຫາທີມຊະນະ.
- ການແຂ່ງຂັນຊີງຊະນະເລີດ ຖ້າຜົນການແຂ່ງຂັນເວລາປົກກະຕິສະເໝີກັນ ແມ່ນຈະມີການຕໍ່ເວລາພິເສດ 15 ນາທີ x 2 = 30 ນາທີ ຖ້າໝົດເວລາການຕໍ່ເວລາພິເສດຍັງສະເໝີກັນຢູ່ ແມ່ນຈະໃຫ້ມີການເຕະຈຸດໂທດ 11 ແມັດ ທັນທີເພື່ອຫາທີມຊະນະເລີດ.

16.1 ໃນໄລຍະຂອງການແຂ່ງຂັນຮອບຄັດເລືອກໃນແຕ່ລະສາຍ ຖ້າຫາກມີທີມໃດທີມໜຶ່ງຊະນະຟາວ ຍ້ອນຝ່າຍກົງກັນຂ້າມບໍ່ລົງແຂ່ງຂັນ ທີມຊະນະຈະໄດ້ 3 ຄະແນນ ແຕ່ຈະບໍ່ມີການຄິດໄລປະຕູໃຫ້.

16.2 ທີມທີ່ຊະນະໃນຮອບຮອງຊະນະເລີດໂດຍບໍ່ໄດ້ແຂ່ງຂັນນັ້ນ ແມ່ນຈະໄດ້ເຂົ້າຊີງຊະນະເລີດໂດຍທັນທີ.

16.3 ທີມທີ່ຊະນະໃນຮອບຊີງຊະນະເລີດໂດຍບໍ່ໄດ້ແຂ່ງຂັນນັ້ນ ທາງຄະນະກໍາມະການຈັດການແຂ່ງຂັນຈະຖືວ່າທີມທີ່ຍັງຢູ່ນັ້ນເປັນທີມຊະນະເລີດຂອງການແຂ່ງຂັນ ສ່ວນຄູ່ແຂ່ງຂັນຊີງອັນດັບ 3 ຈະກາຍເປັນ ອັນດັບ 2 ແລະ ອັນດັບ 3 ໂດຍທັນທີ.

16.4 ທີມທີ່ເຂົ້າຮ່ວມການແຂ່ງຂັນ ຈະຕ້ອງລົງແຂ່ງຂັນຕາມວັນເວລາ ແລະ ສະຖານທີ່ ທີ່ຄະນະກໍາມະການເຕັກນິກຈັດການແຂ່ງຂັນກໍານົດໄວ້ໃນຕາຕະລາງຢ່າງເຂັ້ມງວດ.

16.5 ທີມທີ່ກ່ຽວຂ້ອງໃນນັດແຂ່ງຂັນນັ້ນຕ້ອງໄປເຖິງສະໜາມແຂ່ງຂັນ 90 ນາທີ ກ່ອນການແຂ່ງຂັນ.

16.6 ທຸກໆທີມຈະຕ້ອງປະຕິບັດຕາມກົດລະບຽບຂອງການແຂ່ງຂັນ ແລະ ຕາມການຊີ້ນໍາຂອງຜູ້ຄວບຄຸມການແຂ່ງຂັນ ຢ່າງເຂັ້ມງວດ.

**ມາດຕາ 17 ສະຖານທີ່ການແຂ່ງຂັນ.**

- ສະຖານທີ່ຂອງການແຂ່ງຂັນບານເຕະມີດັ່ງນີ້:
  - ສະໜາມກິລາແຫ່ງຊາດຫຼັກ 16 ສະໜາມໃນ ແລະ ສະໜາມນອກ (ສໍາລັບບານເຕະຊາຍ)
  - ສະໜາມກິລາມະຫາວິທະຍາໄລແຫ່ງຊາດ ແລະ ສະໜາມກິລາກອງທັບ ຫຼັກ 5 (ສໍາລັບບານເຕະຍິງ)
- ສະຖານທີ່ຝຶກຊ້ອມບານເຕະມີດັ່ງນີ້:
  - ສະໜາມຝຶກຊ້ອມແມ່ນອີງຕາມຄະນະຈັດການແຂ່ງຂັນເປັນຜູ້ກໍານົດ.

**ມາດຕາ 18 ການປ່ຽນຕົວ ແລະ ບ່ອນນັ່ງສໍາຮອງ.**

18.1 ການປ່ຽນຕົວ

- ການປ່ຽນຕົວນັກກິລາສໍາຮອງທັງປະເພດຊາຍ ແລະ ຍິງ ແມ່ນສາມາດປ່ຽນຕົວນັກກິລາສໍາຮອງໄດ້ບໍ່ເກີນ 05 ຄົນ/ນັດ.
- ນັກກິລາທີ່ປ່ຽນຕົວອອກແລ້ວ ບໍ່ສາມາດກັບຄືນເຂົ້າໄປຫຼິ້ນໄດ້ອີກ.
- ໃນກໍລະນີທີ່ມີນັກກິລາທີມໃດໜຶ່ງເກີດອຸປະຕິເຫດກະທົບຮຸນແຮງບໍລິເວນຫົວໃນລະຫວ່າງການແຂ່ງຂັນ ແລະໄດ້ຮັບການປະເມີນຈາກທີມແພດປະຈໍາສະໜາມວ່ານັກກິລາດັ່ງກ່າວນັ້ນບໍ່ສາມາດລົງແຂ່ງຂັນໄດ້ຕໍ່, ໃນກໍລະນີດັ່ງກ່າວ, ສະໂມສອນສາມາດນໍາໃຊ້ໂຄຕ້າການປ່ຽນຕົວພິເສດ (Concussion Substitution)ສໍາລັບນັກກິລາຜູ້ທີ່ໄດ້ຮັບບາດເຈັບນັ້ນໄດ້ສູງສຸດ 01 ຄົນ/ນັດ/ສະໂມສອນ ໂດຍກໍລະນີນີ້ຈະບໍ່ລວມກັບການປ່ຽນຕົວປົກກະຕິ, ແຕ່ການປ່ຽນຕົວພິເສດນັ້ນຈະຕ້ອງໄດ້ປ່ຽນຕົວໃນໄລຍະເວລາດັ່ງກ່າວທັນທີພາຍຫຼັງທີ່ໄດ້ຮັບການປະເມີນຈາກທີມແພດປະຈໍາສະໜາມ

ວ່າບໍ່ສາມາດລົງຫຼິ້ນໄດ້ຕໍ່. ການປ່ຽນຕົວພິເສດ(Concussion Substitution)ຈະບໍ່ສາມາດນໍາໄປລວມກັບການປ່ຽນຕົວປົກກະຕິໄດ້. ແຕ່ຖ້າເມື່ອມີການນໍາໃຊ້ການປ່ຽນຕົວພິເສດ (Concussion Substitution)ຈາກສະໂມສອນໃດໜຶ່ງແລ້ວ, ສະໂມສອນຄູ່ແຂ່ງຂັນແມ່ນສາມາດເພີ່ມການປ່ຽນຕົວສໍາຮອງໄດ້ອີກ 01 ຄົນເຊັ່ນກັນ ແລະ ສາມາດນໍາໃຊ້ປ່ຽນຕົວດ້ວຍເຫດຜົນໃດກໍ່ໄດ້ໃນລະຫວ່າງການແຂ່ງຂັນ.

18.2 ບ່ອນນັ່ງສໍາຮອງ(ເຂດເຕັກນິກ)

- ທີມທີ່ລົງແຂ່ງຂັນຈະຕ້ອງນັ່ງຢູ່ໃນເຂດເຕັກນິກ ທີ່ ຄະນະກໍາມະການເຕັກນິກຈັດການແຂ່ງຂັນໄດ້ກໍານົດໄວ້ໃຫ້.
- ຈໍານວນບ່ອນນັ່ງບໍ່ເກີນ 16 ຄົນ(ນັກກິລາສໍາຮອງ 09 ແລະ ຄະນະນໍາ 07) ນັກກິລາສໍາຮອງ ແລະ ຄະນະນໍາ ຕ້ອງນຸ່ງເຄື່ອງທີ່ມີສີແຕກຕ່າງຈາກຜູ້ຫຼິ້ນ, ກໍາມະການຕັດສິນໃນສະໜາມ ແລະ ຕ້ອງຄ້ອງບັດ AD Card ຕະຫຼອດເວລາໃນລະຫວ່າງການແຂ່ງຂັນ ຖ້າຫາກບຸກຄົນໃດໃນທີມບໍ່ມີບັດ AD Card ແມ່ນຈະບໍ່ໃຫ້ນັ່ງໃນບ່ອນນັ່ງສໍາຮອງເດັດຂາດ.

**ມາດຕາ 19** ກໍລະນີເກີດເຫດສຸດວິໄສໃດໜຶ່ງໃນໄລຍະຂອງການແຂ່ງຂັນ ລະຫວ່າງສອງທີມທີ່ກໍາລັງແຂ່ງຂັນຢູ່ ເຊັ່ນ: ໄຟຟ້າມອດ, ລົມພາຍຸກະທັນຫັນ, ຝົນຕົກ, ຟ້າຮ້ອງ, ນໍ້າຖ້ວມເດີ່ນແຂ່ງຂັນ, ມີການຈາລະຈົນ ອັນເປັນສາເຫດໃຫ້ຕ້ອງຢຸດການແຂ່ງຂັນຊົ່ວຄາວ, ທາງຄະນະຈັດການແຂ່ງຂັນ ສົມທົບກັບຜູ້ປະເມີນກໍາມະການຕັດສິນ ຈະພິຈາລະນາສະພາບຄວາມເປັນຈິງວ່າຄວນຍຸດຕິການແຂ່ງຂັນ ຫຼື ສືບຕໍ່ຕາມເວລາ ແລະ ຜົນການແຂ່ງຂັນທີ່ໄດ້ແຂ່ງຂັນໄປແລ້ວນັ້ນ ຖ້າຫາກເກີດແກ່ຍາວຮອດ 30 ນາທີ ຫຼື ຫຼາຍກວ່ານັ້ນໃຫ້ອີງຕາມການປະເມີນສະພາບຕົວຈິງ ຖ້າຫາກສະພາບເຫດການດັ່ງກ່າວບໍ່ສາມາດແຂ່ງຂັນຕໍ່ໄປໄດ້ແມ່ນໃຫ້ຍຸດຕິການແຂ່ງຂັນຢ່າງຖາວອນ ແລະ ຈັດຕັ້ງການແຂ່ງຂັນຄືນໃໝ່ພາຍໃນ 24 ຊົ່ວໂມງຕໍ່ມາ ໂດຍຍັງຄົງຮັກສາເວລາ ແລະ ຜົນການແຂ່ງຂັນໃນນັດນັ້ນໄວ້ຄືເກົ່າ.

## ພາກທີ V

## ການປະທ້ວງ, ການອຸທອນ ແລະ ຕັດສິນບັນຫາ

**ມາດຕາ 20 ການປະທ້ວງ**

ການປະທ້ວງໃດໜຶ່ງ ກ່ຽວກັບການແຂ່ງຂັນນັ້ນສາມາດດໍາເນີນການໄດ້ໃນກໍລະນີດັ່ງຕໍ່ໄປນີ້:

- ປະທ້ວງນັກກິລາທີ່ລົງແຂ່ງຂັນຢ່າງບໍ່ຖືກຕ້ອງຕາມລະບຽບທີ່ໄດ້ກໍານົດໄວ້ໃນກົດລະບຽບການແຂ່ງຂັນ.
- ການຕັດສິນຜິດພາດຈາກກະຕິກາທີ່ໄດ້ກໍານົດ ໄວ້ (ຜິດພາດດ້ານເຕັກນິກ)

20.1 ການປະທ້ວງແຕ່ລະຄັ້ງຕ້ອງດໍາເນີນການໂດຍສອງໜ້າຜູ້ຄວບຄຸມການແຂ່ງຂັນ ແລະ ຜູ້ປະເມີນກໍາມະການຕັດສິນການແຂ່ງຂັນ ພ້ອມທັງມີການບັນທຶກໄວ້ໃນໃບບັນທຶກການແຂ່ງຂັນຕາມລະບຽບການ ພາຍຫຼັງສິ້ນສຸດການແຂ່ງຂັນ 01 ຊົ່ວໂມງ. ການປະທ້ວງທາງການ ທີມທີ່ມີຈຸດປະສົງທີ່ຈະປະທ້ວງແມ່ນຈະຕ້ອງເຮັດເອກະສານປະທ້ວງ ໂດຍຈະຕ້ອງເຊັນຢັ້ງຢືນຈາກຫົວໜ້າຄະນະນໍາທີມ ພ້ອມທັງຕິດຄັດເງິນສົດຈໍານວນ 1,000,000ກີບ (ໜຶ່ງລ້ານກີບ) ເພື່ອສົ່ງໃຫ້ຄະນະຈັດການແຂ່ງຂັນພາຍໃນ 24 ຊົ່ວໂມງພາຍຫຼັງສິ້ນສຸດ

ການແຂ່ງຂັນ. ຖ້າການປະທ້ວງມີຜົນຖືກຕ້ອງ ຄະນະກຳມະການຈັດການແຂ່ງຂັນຈະສົ່ງເງິນດັ່ງກ່າວຄືນໃຫ້ທີມ, ແຕ່ຖ້າການປະທ້ວງບໍ່ມີຜົນທີ່ຖືກຕ້ອງ ເງິນດັ່ງກ່າວຈະບໍ່ສົ່ງຄືນ.

20.2 ການປະທ້ວງໃດໆທີ່ບໍ່ປະຕິບັດຕາມຂັ້ນຕອນທີ່ກ່າວມາຂ້າງເທິງນັ້ນ ຈະຖືເປັນໂມຄະຢ່າງສິ້ນເຊີງ ແລະ ຈະບໍ່ນຳມາພິຈາລະນາ ຫຼື ອຸທອນໃດໆຕື່ມອີກ.

**ມາດຕາ 21 ການອຸທອນ**

21.1 ເມື່ອທີມເຫັນວ່າການຕັດສິນຈາກຄະນະຈັດການແຂ່ງຂັນຍັງບໍ່ສົມເຫດສົມຜົນ ຕາມຄວາມເປັນຈິງນັ້ນ ທີມສາມາດອຸທອນໄປຍັງຄະນະກຳມະການຈັດງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ນະຄອນຫລວງວຽງຈັນ ປີ 2025 ເພື່ອພິຈາລະນາ ພາຍຫຼັງທີ່ໄດ້ຮັບການແຈ້ງຜົນການຕັດສິນໂດຍຄະນະກຳມະການລະບຽບວິໄນ, ການຕັດສິນຂອງຄະນະກຳມະການຈັດງານມະຫະກຳກິລລາແຫ່ງຊາດ ຄັ້ງທີ XII ນະຄອນຫລວງວຽງຈັນ ປີ 2025 ຖືເປັນອັນສິ້ນສຸດຈະບໍ່ອະນຸຍາດໃຫ້ມີການອຸທອນຕື່ມອີກ.

## ພາກທີ VI

## ຂອງລາງວັນ

**ມາດຕາ 22. ລາງວັນ**

22.1 ທີມກິລາບານເຕະທີ່ຊະນະເລີດໃນການແຂ່ງຂັນ ງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ຈະໄດ້ຮັບຫຼຽນຄຳ 20 ຫຼຽນ (ສະເພາະນັກກິລາ) ພ້ອມດ້ວຍໃບຍັ້ງຢືນ.

22.2 ທີມກິລາບານເຕະທີ່ໄດ້ອັນດັບຮອງຊະນະເລີດໃນການແຂ່ງຂັນ ງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ຈະໄດ້ຮັບຫຼຽນເງິນ 20 ຫຼຽນ (ສະເພາະນັກກິລາ) ພ້ອມດ້ວຍໃບຍັ້ງຢືນ.

22.3 ທີມກິລາບານເຕະທີ່ໄດ້ອັນດັບ 3 ໃນການແຂ່ງຂັນ ງານມະຫະກຳກິລາແຫ່ງຊາດ ຄັ້ງທີ XII ຈະໄດ້ຮັບຫຼຽນທອງ 20 ຫຼຽນ (ສະເພາະນັກກິລາ) ພ້ອມດ້ວຍໃບຍັ້ງຢືນ.

## ພາກທີ VII

## ຂໍ້ກຳນົດສຸດທ້າຍ

**ມາດຕາ 23 ບັນຫາທີ່ບໍ່ໄດ້ກຳນົດ**

ບັນຫາໃດທີ່ບໍ່ໄດ້ກຳນົດໄວ້ ໃນກົດລະບຽບການແຂ່ງຂັນສະບັບນີ້ ແມ່ນຈະໄດ້ຮັບການພິຈາລະນາຈາກຄະນະກຳມະການຮັບຜິດຊອບຈັດການແຂ່ງຂັນ.

**ມາດຕາ 24** ກົດລະບຽບສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ກົມກິລາລະດັບສູງ**

**ຫົວໜ້າກຳມະການເຕັກນິກ ແລະ ຈັດການແຂ່ງຂັນ**

**ສະຫະພັນບານເຕະແຫ່ງຊາດລາວ**

ປະທານ

ສ.ຕ.ລ
LAO FOOTBALL FEDERATION

**ວິເພັດ ສີຫາຈັກຣ**